**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງ

ເລກທີ..64../ສພຂ.ຊຍ
ໄຊຍະບຸລີ, ວັນທີ....12...ສິງຫາ 2022

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງ
# ວ່າດ້ວຍການຮັບຮອງການຈັດຕັ້ງປະຕິບັດການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນ ທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກໍາ

- ອີງຕາມ ລັດຖະທໍາມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 77 ວ່າດ້ວຍສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ຂໍ້ 2 ແລະ ມາດຕາ 59 ຂໍ້1;
- ອີງຕາມ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ບົດລາຍງານຂອງພະແນກສຶກສາທິການ ແລະ ກິລາ ກ່ຽວກັບການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກໍາ ສະບັບເລກທີ 2654/ສກຂ.ຊຍ, ລົງວັນທີ 14 ກໍລະກົດ 2022.

ຜ່ານການຄົ້ນຄວ້າ, ປະກອບຄໍາຄິດເຫັນ ແລະ ພິຈາລະນາຢ່າງກວ້າງຂວາງ ເລິກເຊິ່ງ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ ຂອງສະມາຊິກສະພາປະຊາຊົນແຂວງ ໃນຖານະເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ຕໍ່ບົດລາຍງານຂອງພະແນກສຶກສາທິການ ແລະ ກິລາ ກ່ຽວກັບການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກໍາ ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຊຸດທີ II ຄັ້ງວັນທີ 11 ສິງຫາ 2022.

**ກອງປະຊຸມ ຕົກລົງ:**

**ມາດຕາ 1 ຮັບຮອງເອົາບົດລາຍງານ ຂອງພະແນກສຶກສາທິການ ແລະ ກິລາ ກ່ຽວກັບການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກໍາ.**

ກອງປະຊຸມ ສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບຕໍ່ບົດລາຍງານຂອງພະແນກສຶກສາທິການ ແລະ ກິລາ ກ່ຽວກັບການຈັດຕັ້ງປະຕິບັດ ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກໍາ, ເຖິງວ່າການຈັດຕັ້ງປະຕິບັດຕົວຈິງ ຈະມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ບວກກັບການແຜ່ລະບາດຂອງພະຍາດໂຄວິດ-19 ແຕ່ພະແນກສຶກສາທິການ ແລະ ກິລາ ກໍ່ໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດມີຜົນສໍາເລັດຕາມລະດັບຄາດໝາຍ ເປັນຕົ້ນແມ່ນສາມາດຜັນຂະຫຍາຍຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ 5 ປີ (2021-2025) ເຂົ້າສູ່ວຽກງານຕົວຈິງ, ການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງທີ 4 (SDG4), ບັນດາຄາດໝາຍວຽກງານສຶກສາທິການ ແລະ ກິລາ ມີຜົນສໍາເລັດຕາມລະດັບຄາດໝາຍ.

ໄປຄຽງຄູ່ກັບນັ້ນ, ກອງປະຊຸມຍັງເຫັນວ່າ ການຈັດຕັ້ງປະຕິບັດບັນດາຄາດໝາຍ ຍັງມີຫຼາຍຄາດໝາຍບໍ່ບັນລຸ ແລະ ມີລັກສະນະທົດຖອຍ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ຄຸນນະພາບບໍ່ທັນ

ສູງ, ການແກ້ໄຂບັນຫາຄູເຫຼືອບໍ່ພໍ, ການບັນຈຸລັດຖະກອນຄູ ແລະ ຜູ້ບໍລິຫານ, ການແກ້ໄຂຄູອາສາສະໝັກ ຍັງບໍ່ບັນລຸຕາມແຜນການທີ່ວາງໄວ້, ການປະເມີນຜົນການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນຄູ-ອາຈານ ແລະ ຜູ້ບໍລິຫານ ຍັງບໍ່ເປັນປົກກະຕິ; ພື້ນຖານໂຄງລ່າງ, ອຸປະກອນການຮຽນ-ການສອນ, ການຫຼິ້ນກິລາ ຍັງບໍ່ພຽງພໍ, ຄຸນນະພາບການສຶກສາບໍ່ທັນຕອບສະໜອງໄດ້ກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ; ການເຄື່ອນໄຫວວຽກງານກິລາ - ກາຍຍະກຳ ຍັງບໍ່ທັນແຂງແຮງດີ, ການສ້າງບຸກຄະລາກອນກິລາ-ກາຍຍະກຳ ແລະ ນັກກິລາ ຍັງບໍ່ເປັນລະບົບຕໍ່ເນື່ອງ; ການສົ່ງເສີມຄູກິລາ ແລະ ສິ່ງດຶງດູດຈິດໃຈນັກກິລາ  ຍັງມີຈຳກັດ ຈຶ່ງເຮັດໃຫ້ຂະບວນການແຂ່ງຂັນກິລາປະເພດຕ່າງໆ ຢູ່ແຕ່ລະເມືອງບໍ່ທັນຟົດຟື້ນ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ກ່ຽວກັບການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ.**

ກອງປະຊຸມເຫັນດີເປັນເອກະພາບຕໍ່ບັນດາເນື້ອໃນທີ່ກຳນົດໄວ້ຢູ່ໃນທິດທາງແຜນການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ເຊິ່ງປະກອບມີ 4 ຫົວຂໍ້ໃຫຍ່ ແລະ 19 ມາດຕະການ ໃນການປັບປຸງຄຸນນະພາບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ໃນນີ້ ຈະເລັ່ງໃສ່ການແກ້ໄຂບັນຫາຄູເຫຼືອ-ບໍ່ພໍ ໃຫ້ໄດ້ຕາມມະຕິເລກທີ 17/ສພຊ, ລົງວັນທີ 25 ມິຖຸນາ 2019, ບັນຫາການບັນຈຸລັດຖະກອນຄູໃໝ່ ມີ 4 ເງື່ອນໄຂ, ບັນຫາຄູອາສາສະໝັກ ມີ 3 ບຸລິມະສິດ, ບັນຫາຄູອະນຸບານບໍ່ພຽງພໍ ມີ 3 ວິທີການ. ເພື່ອຮັບປະກັນການຈັດຕັ້ງບັນດາທິດທາງແຜນການ ແລະ ມາດຕະການຂອງພະແນກສຶກສາທິການ ແລະ ກິລາ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ ກອງປະຊຸມສະເໜີໃຫ້ພະແນກສຶກສາທິການ ແລະ ກິລາ ເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

1) ຍົກສູງຄຸນນະພາບຂອງການສຶກສາ ແລະ ກິລາ ຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ ໃຫ້ຄົບຖ້ວນ, ສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດ, ມີຄວາມຮູ້, ມີຄວາມສາມາດ, ມີວິຊາຊີບ, ມີຄວາມຊຳນານງານ ໃນຫຼາກຫຼາຍສາຂາອາຊີບຕາມຄວາມຕ້ອງການຂອງຕະຫຼາດແຮງງານເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່ ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນ;

- ຝຶກອົບຮົມການສອນຫ້ອງຄວບ ໃຫ້ຄູສອນຊັ້ນປະຖົມສຶກສາ, ຈັດສັນຄູສອນໃຫ້ໂຮງຮຽນປະຖົມ ຢ່າງພຽງພໍ; ລົງຕິດຕາມຊຸກຍູ້ ຊ່ວຍເຫຼືອ ຄູສອນເຂດຫ່າງໄກສອກຫຼີກ ຈັດສັນຄູສອນດີ ສອນເກັ່ງ ສອນຊັ້ນ ປ.1 ແລະ ປ.2 ໃຫ້ຖືກຕາມວຸດທິ ແລະ ວິຊາທີ່ຮຽນຈົບ; ສະໜອງງົບປະມານ ໃຫ້ຄູສຶກສານິເທດໄດ້ລົງ ນິເທດການຮຽນ ການສອນ ໃນໂຮງຮຽນມັດທະຍົມ ຢ່າງທົ່ວເຖິງ.

- ສັບຊ້ອນຄູປະຖົມເພດຍິງໃຫ້ຊ່ວຍສອນຊັ້ນອະນຸບານ 3 (ຫ້ອງກຽມ), ຄູວິທະຍາສາດທຳມະຊາດໃຫ້ສອນວິຊາເຄມີສາດ, ຟີຊິກສາດ, ຊີວະສາດ;  ຄູວິທະຍາສາດສັງຄົມໃຫ້ສອນ ວິຊາພູມສາດ, ປະຫວັດສາດ, ສຶກສາພົນລະເມືອງ; ສຳລັບວິຊາທັກສະເຊັ່ນ: ສິລະປະດົນຕີ, ສິລະປະກຳ, ເຕັກໂນໂລຊີ, ພື້ນຖານວິຊາຊີບ ແລະ ວິຊາອື່ນໆທີ່ຂາດຄູ ແມ່ນນຳໃຊ້ຜູ້ທີ່ມີພອນສະຫວັນ. ຊຸກຍູ້ສົ່ງເສີມໃຫ້ຄູວິທະຍາສາດທຳມະຊາດໄປຮຽນຕໍ່ວິຊາຊີວະວິທະຍາ, ເຄມີສາດ, ຟີຊິກສາດ ແລະ ວິທະຍາສາດສັງຄົມໄປຮຽນຕໍ່ວິຊາພູມສາດ, ປະຫວັດສາດ, ສຶກສາພົນລະເມືອງ.

2) ຂະແໜງການສຶກສາທິການ ແລະ ກິລາ ຕ້ອງເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ກຳນົດມາດຕະການ, ວິທີການເພື່ອສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ບັນລຸແລ້ວໃຫ້ມີຄວາມຍືນຍົງ, ສຸມໃສ່ແກ້ໄຂບັນດາຄາດໝາຍທີ່ຍັງບໍ່ບັນລຸໃຫ້ມີຄວາມຄືບໜ້າ ແລະ ສາມາດບັນລຸຕາມແຜນການໂດຍສະເພາະແມ່ນບັນດາຄາດໝາຍທີ່ມີທ່າອ່ຽງທົດຖອຍຕໍ່ເນື່ອງມາຫຼາຍປີ ໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ;

3) ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ຄູສອນໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງໃຫ້ສົມເປັນແມ່ພິມຂອງຊາດ; ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການສຶກສາ, ກໍ່ສ້າງຝຶກອົບຮົມຍົກລະດັບຄູສອນ, ຜູ້ອຳນວຍການ, ຜູ້ບໍລິຫານໃຫ້ໄດ້ມາດຕະຖານ ແລະ ເປັນມືອາຊີບ;

- ສຳຫຼວດ, ເກັບກຳຂໍ້ມູນ ກ່ຽວກັບລັດຖະກອນຄູ, ຄູເຫຼືອບໍ່ພໍ ແລະ ຄູອາສາສະໝັກໃຫ້ມີຄວາມຊັດເຈນ ເພື່ອສັບຊ້ອນ, ຈັດສັນຄືນໃໝ່ໃຫ້ເໝາະສົມ ເປັນຕົ້ນຄູອາສາສະໝັກທີ່ສອນມາໄດ້ຫຼາຍປີ ແລະ ມີຄຸນນະພາບໃຫ້ໄດ້ຮັບການບັນຈຸເຂົ້າເປັນລັດຖະກອນຄູ; ຕິດຕາມກວດກາ ແລະ ຄວບຄຸມການຍົກຍ້າຍຂອງລັດຖະກອນຄູຢູ່ແຕ່ລະບ່ອນໃຫ້ເໝາະສົມ

ແລະ ເປັນເອກະພາບ; ເອົາໃຈໃສ່ບຸກລະດົມຂົນຂວາຍລັດຖະກອນຄູຢູ່ໃນຕົວເມືອງທີ່ເຫຼືອລົງໄປປະຈຳຢູ່ຊົນນະບົດ ແລະ ປະຕິບັດນະໂຍບາຍດ້ານວັດຖຸ ແລະ ຈິດໃຈຕໍ່ຄູສອນ, ຜູ້ອຳນວຍການ, ຜູ້ບໍລິຫານທີ່ມີຜົນງານດີເດັ່ນ ໂດຍສະເພາະ ຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກໃຫ້ທັນເວລາ;

- ສ້າງເງື່ອນໄຂໃຫ້ຄູເຫຼືອຊັ້ນປະຖົມໄປຍົກລະດັບ ຫຼື ຝຶກອົບຮົມການສອນຊັ້ນກ່ອນໄວຮຽນ;
- ສືບຕໍ່ຊຸກຍູ້ການສ້າງໂຮງຮຽນລ້ຽງເດັກ-ອະນຸບານພາກເອກະຊົນ ເພື່ອໃຫ້ຄູອະນຸບານອາສາສະໝັກ ທີ່ອອກຈາກໂຮງຮຽນລັດມີວຽກເຮັດງານທຳ ແລະ ເປັນການແກ້ໄຂບັນຫາຂອງໂຮງຮຽນລັດ.

4) ປະສານສົມທົບກັບອົງການປົກຄອງເມືອງ, ບ້ານ, ສະມາຄົມພໍ່ແມ່ນັກຮຽນ ແລະ ພາກສ່ວນກ່ຽວຂ້ອງໃນການຄົ້ນຄວ້າບູລະນະປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງໃຫ້ໜາແໜ້ນ, ສະໜອງອຸປະກອນການຮຽນ-ການສອນໃຫ້ພຽງພໍ, ດັດປັບສະພາບແວດລ້ອມຂອງແຕ່ລະໂຮງຮຽນໃຫ້ມີຄວາມສວຍງາມ, ມີຄວາມປອດໄພ ເພື່ອສ້າງສິ່ງຈູງໃຈແກ່ນ້ອງນັກຮຽນ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ປົກຄອງຫຼາຍຂຶ້ນ;

5) ອອກແຮງສົມທົບກັບພາກສ່ວນກ່ຽວຂ້ອງຢູ່ຂັ້ນເມືອງ, ບ້ານ ລວມເຖິງຜູ້ປົກຄອງເປັນເຈົ້າການບຸກລະດົມຂົນຂວາຍນັກຮຽນທີ່ປະລະການຮຽນໃນແຕ່ລະຊັ້ນຮຽນໃຫ້ໄດ້ກັບມາຮຽນຄືນໃນລະບົບບຳລຸງ, ສ້າງເງື່ອນໄຂ ແລະ ໂອກາດໃຫ້ນັກຮຽນ ໃນເກນຮຽນ ສາມາດເຂົ້າຮຽນວິຊາຊີບ. ປະສານສົມທົບກັບພະແນກແຮງງານ ແລະ ສະຫວັດດີການສັງຄົມຈັດຝຶກອົບຮົມວິຊາຊີບ ພັດທະນາສີມືແຮງງານໃນລະດັບຕ່າງໆ; ຈັດຕັ້ງການບຳລຸງ ຊັ້ນມັດທະຍົມຕອນຕົ້ນໃຫ້ກຸ່ມເປົ້າໝາຍ, ບ່ອນທີ່ມີເງື່ອນໄຂ ໂດຍນຳໃຊ້ຫຼັກສູດຄູ່ຂະໜານເຂົ້າໃນການຮຽນການສອນ C1, C2 ແລະ C3 (ໝາຍວ່າ: ສອນວິຊາຊີບຄຽງຄູ່ກັບຫຼັກສູດສາຍສາມັນ ເມື່ອສຳເລັດຈະໄດ້ຮັບໃບປະກາດວິຊາຊີບຊັ້ນຕົ້ນ ແລະ ໃບປະກາດຊັ້ນມັດທະຍົມຕອນຕົ້ນ);

6) ປັບປຸງກົນໄກການຕິດຕາມ, ກວດກາ, ປະເມີນຜົນເປັນປົກກະຕິ; ສ້າງຖານຂໍ້ມູນໃຫ້ເປັນລະບົບທີ່ທັນສະໄໝ ສາມາດເຊື່ອມຕໍ່ໃນຂອບເຂດທົ່ວແຂວງ, ສູນກາງ ເພື່ອຮັບປະກັນ ການສຶກສາ ທຸກຊັ້ນທຸກສາຍທັງພາກລັດ ແລະ ເອກະຊົນໃຫ້ມີຄຸນນະພາບ; ທັງສ້າງເງື່ອນໄຂໃຫ້ວຽກງານກວດກາ ປະເມີນຜົນ ແລະ ປະກັນຄຸນນະພາບໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ;

7) ເອົາໃຈໃສ່ພັດທະນາບຸກຄະລາກອນກິລາ-ກາຍຍະກຳ, ນັກກິລາ ທີ່ມີພອນສະຫວັນຢູ່ແຕ່ລະເມືອງເພື່ອເຂົ້າຮ່ວມແຂ່ງຂັນ, ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງດ້ານກິລາ-ກາຍຍະກຳໃຫ້ມີຄວາມເຂັ້ມແຂງ, ສະໜອງອຸປະກອນກິລາຢ່າງເໝາະສົມ, ຄຸ້ມຄອງກອງທຶນພັດທະນາກິລາ-ກາຍຍະກຳຂອງແຂວງໃຫ້ມີປະສິດທິຜົນສູງ, ສ້າງເງື່ອນໄຂດ້ານຕ່າງໆ ເພື່ອສົ່ງເສີມພົນລະເມືອງລາວທຸກເພດທຸກໄວໄດ້ອອກກຳລັງກາຍ ແລະ ຫັດກາຍຍະບໍລິຫານຢ່າງທົ່ວເຖິງ; ຄົ້ນຄວ້າປັບປຸງກົນໄກຂອງສະມາຄົມ, ສະຫະພັນກິລາ-ກາຍຍະກຳ ໃຫ້ມີການເຄື່ອນໄຫວຢ່າງປົກກະຕິ; ປະສານສົມທົບກັບຜູ້ປະກອບການທຸລະກິດດ້ານກິລາ ເພື່ອພັດທະນາ ແລະ ຄັດເລືອກນັກກິລາໃຫ້ມີຈຳນວນເພີ່ມຂຶ້ນ ເພື່ອສົ່ງເຂົ້າຮ່ວມແຂ່ງຂັນລະດັບຕ່າງໆ.

**ມາດຕາ 3 ການຈັດຕັ້ງປະຕິບັດ.**

ມອບໃຫ້ອົງການປົກຄອງແຂວງຊີ້ນຳພະແນກສຶກສາທິການ ແລະ ກິລາ, ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງເມືອງ ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ.

ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ ຊີ້ນຳບັນດາຄະນະກຳມະການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ດຳເນີນການຕິດຕາມກວດກາການຈັດຕັ້ງປະຕິບັດ ມະຕິສະບັບນີ້ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ.**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນີລັນ ຄຳພັນເພັງ